**30. ສິດຕົ້ນຕໍຂອງຜູ້ຖືຮຸ້ນມີຄືແນວໃດ?**

ເມື່ອທ່ານເປັນຜູ້ຖືຮຸ້ນຂອງບໍລິສັດໃດໜຶ່ງທີ່ຈົດທະບຽນຢູ່ຕະຫຼາດຫຼັກຊັບລາວ (ຕລຊລ) ທ່ານຈະໄດ້ຮັບສິດຕົ້ນຕໍຈາກການຖືຮຸ້ນ ດັ່ງນີ້:

– ມີສິດໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການເຄື່ອນໄຫວ ຫຼື ຜົນການດໍາເນີນງານຂອງບໍລິສັດ
– ມີສິດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຊຶ່ງໃນກອງປະຊຸມດັ່ງກ່າວ ຜູ້ຖືຮຸ້ນມີສິດໃນການອອກຄໍາຄິດເຫັນ ແລະ ລົງຄະແນນສຽງເຫັນດີ ຫຼື ບໍ່ເຫັນດີ ຕໍ່ມະຕິສໍາຄັນຕ່າງໆທາງທຸລະກິດຂອງບໍລິສັດ;
– ມີສິດອອກສຽງໃນການແຕ່ງຕັ້ງ ຫຼື ປົດຕໍາແໜ່ງຄະນະສະພາຜູ້ບໍລິຫານ ແລະ ຜູ້ອໍານວຍການ;
– ມີສິດຈອງຊື້ຮຸ້ນທີ່ອອກໃໝ່ຂອງບໍລິສັດ ເມື່ອບໍລິສັດຕ້ອງການອອກຈໍາໜ່າຍຮຸ້ນເພີ່ມທຶນ ໃນລາຄາ ແລະ ຈໍານວນ ຕາມການຕົກລົງເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ;
– ມີສິດໄດ້ຮັບເງິນປັນຜົນຕາມອັດຕາສ່ວນຮຸ້ນທີ່ຕົນຖືຄອງ ໃນກໍລະນີທີ່ບໍລິສັດມີຜົນກໍາໄລ ແລະ ມີມະຕິຕົກລົງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນໃນການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ.

ການກໍານົດສິດຂອງຜູ້ຖືຮຸ້ນຄືດັ່ງກ່າວຂ້າງເທິງ ກໍ່ເພື່ອຮັບປະກັນໃຫ້ຜູ້ຖືຮຸ້ນສາມາດກວດສອບກວດກາການດໍາເນີນງານຂອງບໍລິສັດ, ມີສິດຕັດສິນໃຈຕໍ່ບັນຫາສໍາຄັນໃນການດໍາເນີນງານຂອງບໍລິສັດ, ເຊິ່ງທັງໝົດນັ້ນ ກໍ່ເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ້ຖືຮຸ້ນໃນການຖືຮຸ້ນຂອງບໍລິສັດດັ່ງກ່າວ.